ທີ່ພັກອາໄສທີ່ເປັນທັມ ສຳລັບຄົນເຂົ້າເມືອງ

ການຈຳແນກທີ່ອີງໃສ່ຊາດກຳເນີດແມ່ນການປະຕິບັດທີ່ແຕກຕ່າງໃນທີ່ພັກອາໄສອັນເນື່ອງມາຈາກບັນພະບູລຸດ, ຊົນເຜົ່າ, ສະຖານທີ່ເກີດ, ວັດທະນະທັມ, ຫຼື ພາສາຂອງບຸກຄົນ, ແລະມັນເປັນສິ່ງຜິດກົດໝາຍ.

ຕົວຢ່າງຂອງການຈຳແນກດ້ານທີ່ພັກອາໄສທີ່ຜິດກົດໝາຍຊຶ່ງອີງໃສ່ສະຖານະການເຂົ້າເມືອງຂອງທ່ານ ຫຼື ສະຖານທີ່ເກີດຂອງທ່ານ:

- ເຈົ້າຂອງເຮືອນເຊົ່າປະຕິເສດທີ່ຈະສ້ອມແປງອາພາດເມັນທ໌ຂອງທ່ານ, ແຕ່ວ່າໄປສ້ອມແປງໃຫ້ແກ່ຜູ້ເຊົ່າອື່ນໆ ທີ່ບໍ່ແມ່ນຄົນເຂົ້າເມືອງ;
- ທ່ານໄດ້ຮັບການບອກກ່າວວ່າ ປະຊາຊົນທຸກຄົນທີ່ເວົ້າພາສາຂອງທ່ານແມ່ນອາໄສຢູ່ໃນເຂດທີ່ຢູ່ອາໄສສະເພາະ, ແລະທ່ານກຳຈະຮູ້ສຶກສະດວກສະບາຍຫຼາຍກວ່າທີ່ຈະອາໄສຢູ່ບ່ອນນັ້ນກັບເຂົາເຈົ້າ;
- ທ່ານໄດ້ຮັບການບອກກ່າວວ່າ ທ່ານບໍ່ສາມາດຕ້ອນຮັບແຂກຂອງທ່ານໄດ້ເນື່ອງຈາກເຂົາເຈົ້າມາຈາກປະເທດອື່ນໆ;
- ທ່ານບອກເຈົ້າຂອງເຮືອນເຊົ່າວ່າ ເພື່ອນບ້ານຂອງທ່ານ ເວົ້າລົມໃນທາງເສັງຫາຍຕໍ່ຄອບຄົວຂອງທ່ານກ່ຽວກັບ ປະເທດທີ່ທ່ານຈາກມາ, ແລະ ເຂົາ/ລາວກໍບໍ່ເຮັດຫຍັງ ເພື່ອຍຸດຕິການຂົ່ມເຫັງ ຫຼື ການກໍ່ກວນນັ້ນ;
- ທ່ານຖືກຖາມວ່າ ທ່ານເກີດຢູ່ໃສໃນເວລາທ່ານສະໝັກເຂົ້າອາພາດເມັນທ໌;
- ເຈົ້າຂອງເຮືອນເຊົ່າເກັບຄ່າເຊົ່າໃນລາຄາທີ່ແຕກຕ່າງກັນ ຫຼື ຖາມເອົາຂໍ້ມູນຕື່ມ ຫຼື ເອກະສານຕື່ມ ອັນເນື່ອງຈາກປະເທດທີ່ທ່ານຈາກມາ;
- ເຈົ້າຂອງເຮືອນເຊົ່າປະຕິເສດທີ່ຈະໃຫ້ທ່ານເຊົ່າເຮືອນເນື່ອງຈາກພາສາແມ່ຂອງທ່ານບໍ່ແມ່ນພາສາອັງກິດ;
- ເຈົ້າຂອງເຮືອນເຊົ່າປະຕິເສດທີ່ພັກອາໄສສຳລັບທ່ານເນື່ອງຈາກທ່ານບໍ່ມີເລກປະກັນສັງຄົມ ຫຼື ບັດປະຈຳຕົວທີ່ຣັຖບານອອກໃຫ້.

ກົດໝາຍວ່າດ້ວຍທີ່ພັກອາໄສທີ່ເປັນທັມປົກປ້ອງ<u>ທຸກຄົນ</u>ໃນສະຫະຣັຖອາເມລິກາ. ສະຖານະຄົນເຂົ້າເມືອງຂອງທ່ານບໍ່ສົ່ງຜົນກະທົບຕໍ່ສິດທິດ້ານທີ່ພັກອາໄສທີ່ເປັນທັມຂອງທ່ານ.

<u>ມັນຜິດກົດໝາຍ</u> ສຳລັບ ເຈົ້າຂອງເຮືອນເຊົ່າທີ່ຈະປະຕິເສດທີ່ພັກອາໄສ ໃຫ້ທ່ານ ຫຼື ປະຕິບັດຕໍ່ທ່ານຢ່າງແຕກຕ່າງຈາກຄົນອື່ນໆ ອັນເນື່ອງມາ ຈາກຊາດກຳເນີດຂອງທ່ານ: ປະເທດທີ່ທ່ານເກີດ, ຊື່ຂອງທ່ານ, ລັກສະນະຂອງທ່ານ, ສຳນຽງ ຫຼື ວັດທະນະທັມ, ສະຖານະຄົນເຂົ້າເມືອງ, ຫຼື ເນື່ອງຈາກທ່ານກ່ຽວພັນກັບບຸກຄົນທີ່ເປັນຄົນເຂົ້າເມືອງ.

ມີຫຍັງແດ່ທີ່ທ່ານສາມາດເຮັດໄດ້?

- ເກັບຮັກສາເອກະສານທັງໝົດ - ບັນທຶກ, ແຈ້ງການ, ໃບຮັບ, ຂໍ້ຄວາມໃນໂທຣະສັບ, ຂໍ້ມູນຕິດຕໍ່, ຈົດໝາຍ, ອື່ນໆ.
- ຖ່າຍຮູບບັນຫາ ຖ້າວ່າທ່ານເຮັດໄດ້.
- ເອົາຊື່ ແລະຈຳນວນຄົນທີ່ກ່ຽວຂ້ອງ.
- ເອົາຕົວເລກ - ວັນທີເກີດເຫດການ, ທີ່ຢູ່ບ່ອນທີ່ເກີດເຫດການ, ຄ່າໃຊ້ຈ່າຍຕ່າງໆ.
- ລົມກັບເພື່ອນບ້ານ – ມີໃຜອີກແດ່ທີ່ກຳລັງປະສົບກັບບັນຫານີ້? ໃຜເຫັນເຫດການແດ່?

ສະພາດູແລທີ່ພັກອາໄສທີ່ເປັນທັມແຫ່ງຣັຖອໍຣິກອນຢູ່ນີ້ ເພື່ອຊ່ວຍທ່ານ!

ຖ້າຫາກທ່ານຄິດວ່າ ທ່ານໄດ້ປະເຊີນກັບການຈຳແນກຕ້ານຕໍ່ບຸກຄົນ, ຫຼື ຖ້າຫາກທ່ານຕ້ອງການຂໍ້ມູນຕື່ມກ່ຽວກັບສິດທິຂອງທ່ານ, ທ່ານສາມາດ ໂທຣໄປທີ່ສາຍໂທຣດ່ວນຂອງພວກເຮົາທີ່ **1-800-424-3247**, ຕໍ່ 2, ຫຼືຢ້ຽມຊົມເວັບໄຊ **www.fhco.org**. ບໍລິການທັງໝົດຂອງພວກເຮົາແມ່ນ ບໍ່ເສັງຄ່າໃຊ້ຈ່າຍແລະເປັນຄວາມລັບ.

ສະພາດູແລທີ່ພັກອາໄສທີ່ເປັນທັມ (FHCO) ແມ່ນອົງການ
*ເພື່ອສິດທິພົນລະເມືອງ*ທີ່***ບໍ່ແມ່ນຂອງຣັຖບານ*** *ແລະ ບໍ່*
*ສະແຫວງຫາຜົນກຳໄລ*ຊຶ່ງ*ໃຫ້ການຮັບໃຊ້ໃນຣັຖອໍຣິກອນ.*

EQUAL HOUSING OPPORTUNITY

ວຽກທີ່ເປັນພື້ນຖານສຳລັບການຕີພິມນີ້ແມ່ນໄດ້ຮັບການສະໜັບສະໜູນ ຈາກກອງທຶນພາຍໃຕ້ທຶນຊ່ວຍເຫຼືອຂອງກະຊວງດູແລທີ່ພັກອາໄສແລະການພັດທະນາເມືອງຂອງສະຫະຣັຖອາເມລິກາ. ເນື້ອໃນແລະວຽກນີ້ ແມ່ນອຸທິດໃຫ້ແກ່ສາທາລະນະ. ຜູ້ແຕ່ງແລະຜູ້ພິມຮັບຜິດຊອບແຕ່ພຽງ ຜູ້ດຽວຕໍ່ຄວາມຖືກຕ້ອງຂອງຂໍ້ຄວາມແລະການຕີຄວາມທີ່ບັນຈຸຢູ່ໃນ ສິ່ງຕີພິມນີ້. ການຕີຄວາມດັ່ງກ່າວບໍ່ຈຳເປັນຕ້ອງສະທ້ອນເຖິງຄວາມ ຄິດເຫັນຂອງຣັຖບານກາງ.

ມີຂໍ້ມູນການບໍລິການສະໜອງໃຫ້ໃນຮູບແບບອື່ນ ແລະມີບໍລິການແປພາສາ.